ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ 3384 /ກປ

ນະຄອນຫຼວງວຽງຈັນ, ວັນທີ 19 JUL 2023

# ແຈ້ງການ

ເຖິງ: - ຫ້ອງການ, ບັນດາກົມ, ສະຖາບັນ, ຫົວໜ່ວຍວິຊາການລະດັບສອງ ອ້ອມຂ້າງກະຊວງ;
- ບັນດາ ວິທະຍາໄລກະສິກຳ ແລະ ປ່າໄມ້ ແລະ ໂຮງຮຽນ ຊົນລະປະທານຊັ້ນສູງ ທ່າງ່ອນ;
- ບັນດາ ພະແນກກະສິກຳ ແລະ ປ່າໄມ້ ແຂວງ/ນະຄອນຫຼວງວຽງຈັນ;
- ບັນດາ ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ/ນະຄອນ.

ເລື່ອງ: ການແບ່ງຄວາມຮັບຜິດຊອບວຽກງານການກຳນົດຕຳແໜ່ງງານ ຂອງຂະແໜງກະສິກຳ ແລະ ປ່າໄມ້.

- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ແຈ້ງການ ຂອງກະຊວງພາຍໃນ ສະບັບເລກທີ 180/ພນ, ລົງວັນທີ 27 ມິຖຸນາ 2023;
- ອີງຕາມ ໜັງສືສະເໜີ ຂອງກົມຈັດຕັ້ງ ແລະ ພະນັກງານ ສະບັບເລກທີ 1442/ກຈພ, ລົງວັນທີ 11 ກໍລະກົດ 2023.

ກະຊວງກະສິກຳ ແລະ ປ່າໄມ້ ຂໍຖືເປັນກຽດແຈ້ງມາຍັງທ່ານ ຊາບວ່າ: ເພື່ອເຮັດໃຫ້ຂະແໜງກະສິກຳ ແລະ ປ່າໄມ້ ນັບແຕ່ສູນກາງຮອດທ້ອງຖິ່ນ ມີຄວາມເປັນເອກະພາບໃນການຜັນຂະຫຍາຍນິຕິກຳ ຂອງຂັ້ນເທິງວາງອອກ ກ່ຽວກັບການແບ່ງຄວາມຮັບຜິດຊອບວຽກງານການກຳນົດຕຳແໜ່ງງານໃຫ້ອົງການຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຮັບຜິດຊອບໂດຍກົງ ໃຫ້ໄດ້ຮັບການຈັດຕັ້ງປະຕິບັດຢ່າງເປັນຮູບປະທຳ, ມີຄວາມເອກະພາບ ແລະ ມີປະສິດທິຜົນສູງ. ສະນັ້ນ, ກະຊວງກະສິກຳ ແລະ ປ່າໄມ້ ຈຶ່ງແຈ້ງມາຍັງແຕ່ລະພາກສ່ວນ ຈັດຕັ້ງປະຕິບັດດັ່ງນີ້:

1. ໃຫ້ກົມຈັດຕັ້ງ ແລະ ພະນັກງານ ເປັນເຈົ້າການໃນການ ຕິດຕາມ, ກວດກາ, ຊຸກຍູ້, ແນະນຳ, ກວດຜ່ານ ແລະ ຢັ້ງຢືນ ການກຳນົດຕຳແໜ່ງງານ ຂອງຫ້ອງການ, ບັນດາກົມ, ສະຖາບັນ, ຫົວໜ່ວຍວິຊາການລະດັບສອງ ອ້ອມຂ້າງກະຊວງ, ບັນດາວິທະຍາໄລກະສິກຳ ແລະ ປ່າໄມ້ ແລະ ໂຮງຮຽນ ຊົນລະປະທານຊັ້ນສູງ ທ່າງ່ອນ ເພື່ອນຳສະເໜີກະຊວງພາຍໃນ ພິຈາລະນາຮັບຮອງເອົາການກຳນົດຕຳແໜ່ງງານ ຕາມລະບຽບການ; ພ້ອມທັງດຳເນີນການຊຸກຍູ້, ຕິດຕາມ ແລະ ອຳນວຍຄວາມສະດວກດ້ານຕ່າງໆ ຂອງຂະແໜງກະສິກຳ ແລະ ປ່າໄມ້ ຢູ່ຂັ້ນແຂວງ ແລະ ເມືອງ ໃຫ້ສຳເລັດ. ສຳລັບການລົງລາຍເຊັນໃບຢັ້ງຢືນການກຳນົດຕຳແໜ່ງງານພາຍຫຼັງຖືກຮັບຮອງຈາກກະຊວງພາຍໃນ ແມ່ນລັດຖະມົນຕີ ລົງລາຍເຊັນໃບຢັ້ງຢືນການກຳນົດຕຳແໜ່ງງານ ຂັ້ນຫົວໜ້າ, ຮອງຫົວໜ້າກົມ; ຫົວໜ້າກົມ ຫຼື ທຽບເທົ່າ ລົງລາຍເຊັນໃບຢັ້ງຢືນການກຳນົດຕຳແໜ່ງງານ ຂັ້ນພະແນກລົງຮອດວິຊາການທີ່ຢູ່ໃນການຄຸ້ມຄອງຂອງຕົນ;
2. ໃຫ້ບັນດາພະແນກກະສິກຳ ແລະ ປ່າໄມ້ ແຂວງ/ນະຄອນຫຼວງວຽງຈັນ ເປັນເຈົ້າການໃນການ ຕິດຕາມ, ກວດກາ, ຊຸກຍູ້, ແນະນຳ, ກວດຜ່ານ ແລະ ຢັ້ງຢືນ ການກຳນົດຕຳແໜ່ງງານ ຂອງບັນດາຂະແໜງ, ກອງ, ສູນ ທີ່ຂຶ້ນກັບຕົນ ແລ້ວນຳສະເໜີ ເຈົ້າແຂວງ/ເຈົ້າຄອງ ພິຈາລະນາຮັບຮອງເອົາການກຳນົດຕຳແໜ່ງງານ ບົນພື້ນຖານ

ການ ກວດຜ່ານ, ຢັ້ງຢືນ ແລະ ສະເໜີ ຂອງພະແນກພາຍໃນ ແຂວງ/ນະຄອນຫຼວງວຽງຈັນ; ສ່ວນການກຳນົດຕຳແໜ່ງງານ ຂອງຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ/ນະຄອນ ກ່ອນທີ່ ເຈົ້າເມືອງ/ເຈົ້ານະຄອນ ພິຈາລະນານຳສະເໜີຫາ ເຈົ້າແຂວງ/ເຈົ້າຄອງ ແມ່ນໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ/ນະຄອນ ປະສານສົມທົບເປັນເອກະພາບກັບພະແນກກະສິກຳ ແລະ ປ່າໄມ້ ແຂວງ/ນະຄອນຫຼວງວຽງຈັນ ແລະ ພະແນກພາຍໃນ ແຂວງ/ນະຄອນຫຼວງວຽງຈັນ ກ່ອນ.

- ສຳລັບການລົງລາຍເຊັນໃບຢັ້ງຢືນການກຳນົດຕຳແໜ່ງງານ ພາຍຫຼັງຖືກຮັບຮອງເອົາການກຳນົດຕຳແໜ່ງງານຈາກ ເຈົ້າແຂວງ/ເຈົ້າຄອງ ແມ່ນ ເຈົ້າແຂວງ/ເຈົ້າຄອງ ລົງລາຍເຊັນໃບຢັ້ງຢືນການກຳນົດຕຳແໜ່ງງານ ຫົວໜ້າ, ຮອງຫົວໜ້າ ພະແນກກະສິກຳ ແລະ ປ່າໄມ້ ແຂວງ/ນະຄອນຫຼວງວຽງຈັນ; ຫົວໜ້າພະແນກ ລົງລາຍເຊັນໃບຢັ້ງຢືນການກຳນົດຕຳແໜ່ງງານ ຂັ້ນຂະແໜງລົງຮອດວິຊາການທີ່ຢູ່ໃນການຄຸ້ມຄອງຂອງຕົນ. ສ່ວນການລົງລາຍເຊັນໃບຢັ້ງຢືນການກຳນົດຕຳແໜ່ງງານ ຂອງຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ/ນະຄອນ ພາຍຫຼັງຖືກຮັບຮອງເອົາການກຳນົດຕຳແໜ່ງງານຈາກ ເຈົ້າແຂວງ/ເຈົ້າຄອງ ແມ່ນ ເຈົ້າເມືອງ/ເຈົ້ານະຄອນ ລົງລາຍເຊັນໃບຢັ້ງຢືນການກຳນົດຕຳແໜ່ງງານ ຫົວໜ້າ, ຮອງຫົວໜ້າ ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ/ນະຄອນ; ຫົວໜ້າຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ/ນະຄອນ ລົງລາຍເຊັນໃບຢັ້ງຢືນການກຳນົດຕຳແໜ່ງງານ ຂັ້ນໜ່ວຍງານລົງຮອດວິຊາການທີ່ຢູ່ໃນການຄຸ້ມຄອງຂອງຕົນ;

3. ສຳລັບວິທີ, ຂັ້ນຕອນ ແລະ ບາດກ້າວ ຂອງການກຳນົດຕຳແໜ່ງງານ ແມ່ນໃຫ້ປະຕິບັດ ຕາມດຳລັດ ວ່າດ້ວຍການກຳນົດຕຳແໜ່ງງານ ສະບັບເລກທີ 734/ລບ, ລົງວັນທີ 31 ທັນວາ 2021 ແລະ ຄຳແນະນຳ ວ່າດ້ວຍການຜັນຂະຫຍາຍດຳລັດ ວ່າດ້ວຍການກຳນົດຕຳແໜ່ງງານ ສະບັບເລກທີ 04/ພນ, ລົງວັນທີ 01 ພະຈິກ 2022 ຕາມການແບ່ງຂັ້ນຄຸ້ມຄອງ ໂດຍໃຫ້ການກຳນົດຕຳແໜ່ງງານ ຂອງແຕ່ລະພາກສ່ວນ ຖືກຕ້ອງ, ສອດຄ່ອງກັບພາລະບົດບາດ, ສິດ, ໜ້າທີ່ ແລະ ປະລິມານວຽກງານຕົວຈິງຂອງຕົນ; ຮັບປະກັນໄດ້ຄວາມຈະແຈ້ງ, ພາວະວິໄສ, ຍຸຕິທຳ ແລະ ຮັບປະກັນໃຫ້ພະນັກງານ-ລັດຖະກອນແຕ່ລະຕຳແໜ່ງ ມີໜ້າທີ່ຄວາມຮັບຜິດຊອບຢ່າງຈະແຈ້ງ ແລະ ເໝາະສົມ;

4. ກໍລະນີ ຫາກພົບຄວາມຫຍຸ້ງຍາກ ບໍ່ໂລ່ງລ່ຽນ ຫຼື ບໍ່ເປັນເອກະພາບ ໃນການກຳນົດຕຳແໜ່ງງານ ແມ່ນໃຫ້ສະເໜີມາຍັງກະຊວງກະສິກຳ ແລະ ປ່າໄມ້ ເພື່ອນຳສະເໜີຂໍຄຳເຫັນຈາກກະຊວງພາຍໃນ ພິຈາລະນາແກ້ໄຂຮ່ວມກັນ ຕາມຄວາມເໝາະສົມ;

5. ໃຫ້ຫ້ອງການ, ບັນດາກົມ ແລະ ຫົວໜ່ວຍວິຊາການລະດັບສອງອ້ອມຂ້າງກະຊວງ, ບັນດາວິທະຍາໄລກະສິກຳ ແລະ ປ່າໄມ້, ໂຮງຮຽນ ຊົນລະປະທານຂັ້ນສູງ ທ່າງ່ອນ ແລະ ພະແນກກະສິກຳ ແລະ ປ່າໄມ້ ແຂວງ/ນະຄອນຫຼວງວຽງຈັນ ເປັນເຈົ້າການໃນການລາຍງານການກຳນົດຕຳແໜ່ງງານ ຂອງບັນດາຫົວໜ່ວຍທີ່ຂຶ້ນກັບຕົນ ປະຈຳທຸກໆ 03 ເດືອນ ເພື່ອສັງລວມ ແລະ ຕິດຕາມ ບົນພື້ນຖານການລາຍງານຈາກພາກສ່ວນທີ່ກ່ຽວຂ້ອງ ແລ້ວສັງລວມລາຍງານໃຫ້ ກົມຈັດຕັ້ງ ແລະ ພະນັກງານ ເພື່ອຕິດຕາມ ແລະ ເປັນຂໍ້ມູນລາຍງານຂັ້ນເທິງ ເປັນແຕ່ລະໄລຍະ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ.

**ລັດຖະມົນຕີ**

ກະຊວງກະສິກຳ ແລະ ປ່າໄມ້ ລັດຖະມົນຕີ

**ປອ. ເພັດ ພົມພິພັກ**

**ບ່ອນນຳສົ່ງ**

1. ທ່ານ ລັດຖະມົນຕີ, ຮອງ ລມຕ 01 ສະບັບ;
2. ຫ້ອງການ, ບັນດາກົມ, ສະຖາບັນ, ຫົວໜ່ວຍວິຊາການລະດັບສອງ, ວກປ/ໂຮງຮຽນ 01 ສະບັບ;
3. ພະແນກ ກປ ແຂວງ/ນວ 01 ສະບັບ;
4. ເກັບຮັກສາໄວ້ 02 ສະບັບ.